ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 3330 /ທຄຕລ 2024

ນະຄອນຫຼວງວຽງຈັນ, ວັນທີ: 25 SEP 2024

## ໜັງສືແຈ້ງເຊີນປະມູນ

**ເຖິງ**: ບັນດາບໍລິສັດຮັບເໝົາກໍ່ສ້າງ, ຕົບແຕ່ງ ແລະ ຕິດຕັ້ງແກ້ວ ທີ່ນັບຖື.

**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາປັບປຸງແກ້ວໜ້າອາຄານສຳນັກງານ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ຕົບແຕ່ງ ແລະ ຕິດຕັ້ງແກ້ວ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາວຽກປັບປຸງແກ້ວໜ້າອາຄານ ທຄຕລ ສຳນັກງານໃຫຍ່ ຕັ້ງຢູ່ ຖະໜົນປາງຄຳ ບ້ານຊຽງຍືນ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ໂດຍມີລາຍລະອຽດດັ່ງລຸ່ມນີ້:

### I. ລາຍການທີ່ຈະປັບປຸງປະກອບມີ

**1. ໜ້າວຽກຫຼັກ**

1) ອະນາໄມກາວເກົ່າໃຫ້ສະອາດ ແລ້ວສີດກາວຈັບແກ້ວສະເພາະ ທີ່ຮັບປະກັນ ແລະ ມີຄຸນນະພາບ;
2) ໃຊ້ຂອບໂລ ຍີ່ຫໍ້ BGF ຍຶດແກ້ວໄວ້ ເພື່ອຮັບປະກັນສາມາດນຳໃຊ້ໄດ້ຍາວນານ;
3) ອະນາໄມແກ້ວໃຫ້ສະອາດພາຍຫຼັງປະຕິບັດວຽກສຳເລັດ;

**2. ຂະໜາດ ແລະ ບໍລິມາດຂອງໜ້າວຽກ**

1) ຕຶກ A ຈຳນວນ 144 ແຜ່ນ ຂະໜາດຂອງແກ້ວ ລວງສູງ 107cm/ແຜ່ນ ລວງກວ້າງ 60cm/ແຜ່ນ ຄວາມໜາ 06mm:
2) ຕຶກ B ຈຳນວນ 104 ແຜ່ນ ຂະໜາດຂອງແກ້ວ ລວງສູງ 95cm/ແຜ່ນ ລວງກວ້າງ 66cm/ແຜ່ນ ຄວາມໜາ 06mm;
3) ຕຶກ C ຈຳນວນ 336 ແຜ່ນ ຂະໜາດຂອງແກ້ວ ລວງສູງ 106.2cm/ແຜ່ນ ລວງກວ້າງ 72.5cm/ແຜ່ນ ຄວາມໜາ 06mm;
4) ຕຶກ D ຈຳນວນ 45 ແຜ່ນ ຂະໜາດຂອງແກ້ວ ລວງສູງ 120cm/ແຜ່ນ ລວງກວ້າງ 101cm/ແຜ່ນ ຄວາມໜາ 06mm.

### II. ເງື່ອນໄຂການປະກອບເອກະສານການປະມູນ

**1. ເອກະສານຊອງທີ 1 (ບໍ່ປິດຊອງ)**

1) ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດ (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2023 ແລະ ໃບອະນຸຍາດດຳເນີນທຸລະກິດ);
2) ເອກະສານກ່ຽວກັບມາດຕະຖານເຕັກນິກແມ່ນໃຫ້ລະບຸຄົບຖ້ວນກ່ຽວກັບວັດສະດຸທີ່ຈະນຳໃຊ້, ກຳນົດໄລຍະເວລາສຳເລັດວຽກ ແລະ ໄລຍະເວລາການຮັບປະກັນ;
3) ຄຸນວຸດທິຂອງບໍລິສັດ ແລະ ປະສົບການທີ່ເຮັດວຽກດັ່ງກ່າວ ຫຼື ວຽກທີ່ຄ້າຍຄືລັກສະນະດຽວກັນ;
4) ກຳນົດຍື່ນຊອງມາດຕະຖານເຕັກນິກ ຈະປິດຮັບວັນທີ **16/10/2024** ເວລາ **15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ທີ່ປ່ອງຂາອອກ-ຂາເຂົ້າ ອາຄານ C ຊັ້ນ 4;

**2. ເອກະສານຊອງທີ 2 (ປິດຊອງ)**

1) ໃບສະເໜີລາຄາໃຫ້ລະບຸລາຄາລວມອາກອນມູນຄ່າເພີ່ມ ທັງໝົດເປັນສະກຸນເງິນກີບ ໃຫ້ຄົບຖ້ວນ;
2) ໃນວັນທີ **23/10/2024** ເວລາ **9:00** ໂມງ ແມ່ນມື້ເປີດຊອງປະມູນ ແຈ້ງໃຫ້ບໍລິສັດຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມອາຄານ C ຊັ້ນ 5 ຫ້ອງ 5/2;



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

3) ຜູ້ຮັບເໝົາ ຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 31/01/2025) ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ) ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

**III. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ຊະນະການປະມູນ**

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 02% ຂອງມູນຄ່າລວມທີ່ສະເໜີປະມູນ;
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນຄວາມຮັບຜິດຊອບຂອງຜູ້ສະໜອງ.

**IV. ການຊຳລະ ແບ່ງເປັນ 03 ງວດ**

1) ງວດທີ 01: ຊຳລະ 50% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກສຳເລັດ 50% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ;
2) ງວດທີ 02: ຊຳລະ 40% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກ 100% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ;
3) ງວດທີ 03: ຊຳລະເງິນຄ້ຳປະກັນຄຸນນະພາບ ທີ່ຫັກໄວ້ 10% ຂອງມູນຄ່າທັງໝົດ ໄລຍະ 01 ປີ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ແຂວງ ... ຫລວງ

**ນ. ສາຍສະໝອນ ຈັນທະຈັກ**

**ຜູ້ປະສານງານ:**

ທ່ານ ພູວອນ ສໍອິນໄຊ 020 5955 9889


ຕຶກ A
BCEL
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC


ຕຶກ B


ຕຶກ C
BANQUE POUR LE COMMERCE EXTERIEUR LAO PUBLIC


ຕຶກ D